ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

LAO WORLD
PUBLIC COMPANY
ຮ່ວມມືກັນ, ເຮົາສ້າງໂລກໄດ້

ແຈ້ງເຫດການໄຟໄຫມ້ທີ່ສູນການຄ້າລາວໄອເຕັກ

ໃນນາມ ບໍລິສັດ ລາວເວີນ ມະຫາຊົນ ຂໍແຈ້ງກ່ຽວກັບເຫດທີ່ເກີດຂຶ້ນໃນຕອນເຊົ້າ ຂອງວັນທີ 10 ພຶດສະພາ 2019 ຢູ່ສູນ ງານ ວາງສະແດງສິນຄ້າ ລາວໄອເຕັກດັ່ງນີ້:

ຕອນເຊົ້າ ເວລາ 8:34 ໄດ້ມີໄຟເກີດຂຶ້ນທີ່ບູດວາງສະແດງຈຸດ 1 ເຊິ່ງເປັນຈຸດທີ່ມີສິນຄ້າໄວໄຟຈຶ່ງເຮັດເພີ່ງຂະຫຍາຍໄປສູ່ຮ້ານອື່ນ ຢ່າງໄວ, ຕໍ່ສະພາບການດັ່ງກ່າວ ພະນັກງານຂອງ ບໍລິສັດ ລາວເວີນ ຈຶ່ງໄດ້ພ້ອມກັນຮີບດັບໄຟດ້ວຍບັ້ງດັບເພີ່ງຈຳນວນຫຼາຍແຕ່ຍັງ ບໍ່ສາມາດຢັບຢັ້ງເພີ່ງດັ່ງກ່າວໄດ້. ຕໍ່ມາຈົນເຈົ້າໜ້າທີ່ດັບເພີ່ງຂອງກະຊວງປ້ອງກັນຄວາມສະຫງົບ, ນະຄອນຫຼວງ ແລະ ເມືອງໄຊ ຖານີລວມຈຳນວນ 7 ຄັນ ໄດ້ເຂົ້າມາຊ່ວຍດັບເພີ່ງທັນເວລາ ພາຍໃນ 45 ນາທີ ກໍ່ສາມາດດັບໄຟທັ້ງໝົດໄດ້.

ສ່ວນສາເຫດທີ່ພາໃຫ້ເກີດໄຟໄໝ້ນັ້ນ ເຈົ້າໜ້າທີ່ຍັງຢູ່ໃນຂັ້ນຕອນກວດສອບ ແລະ ວິໃຈ, ຕາມການສັນນິຖານເບື້ອງຕົ້ນອາດ ເກີດຈາກໄຟຟ້າລັດວົງຈອນ.

ຜ່ານການກວດກາສະພາບຄວາມເສຍຫາຍໃນເບື້ອງຕົ້ນ ແມ່ນ 24 ຮ້ານຄ້າໄດ້ຮັບຄວາມເສຍຫາຍ ເຊິ່ງຄິດເປັນເປີເຊັນ ເທົ່າ ກັບ 6% ຂອງຈຳນວນຮ້ານທັ້ງໝົດ 382 ຮ້ານ. ສ່ວນການປະເມີນຄວາມເສຍຫາຍໂຕຈິງແມ່ນຢູ່ໃນຂັ້ນຕອນການກວດສອບ. ດັ່ງນັ້ນຈຶ່ງແຈ້ງມາຍັງທຸກພາກສ່ວນເພື່ອຊາບຕໍ່ກັບເຫດການທີ່ເກີດຂຶ້ນຕົວຈິງດັ່ງກ່າວ.

ທີ່ນະຄອນຫຼວງວຽງຈັນ, ວັນທີ 11 ພຶດສະພາ 2019
ຜູ້ອຳນວຍການໃຫຍ່

ທ່ານ ສີບຸນທຳ ສີບຸນມີ